ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 104 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 47/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 47 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງ ເງິນຕາຕ່າງປະເທດ (ສະບັບປັບປຸງ)

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 28 ມິຖຸນາ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງ ວັນທີ 7 ກໍລະກົດ 2022.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 15 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ
# ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຊຸກຍູ້ສົ່ງເສີມການຈໍລະຈອນເງິນຕາ, ການຄ້າ, ການບໍລິການ, ການລົງທຶນ ໃຫ້ມີປະສິດທິພາບ, ປະສິດທິຜົນ, ສ້າງຄວາມເຂັ້ມແຂງຖານະການຊໍາລະກັບຕ່າງປະເທດ ແລະ ຄັງສໍາຮອງເງິນຕາຕ່າງປະເທດ ແນໃສ່ຍົກສູງຄຸນຄ່າ ແລະ ຮັກສາສະຖຽນລະພາບຂອງເງິນຕາແຫ່ງຊາດ, ເປີດກວ້າງການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ການຄຸ້ມຄອງເງິນຕາຕ່າງປະເທດ

ການຄຸ້ມຄອງເງິນຕາຕ່າງປະເທດ ແມ່ນ ການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບເງິນຕາຕ່າງປະເທດ ແລະ ຄໍາ ຂອງຜູ້ມີ ແລະ/ຫຼື ບໍ່ມີພູມລໍາເນົາ ຢູ່ ສປປ ລາວ ໃນການຄອບຄອງ, ການນໍາໃຊ້; ການຊໍາລະກັບຕ່າງປະເທດກ່ຽວກັບ ການຄ້າ, ການບໍລິການ, ການຊ່ວຍເຫຼືອລ້າ, ການລົງທຶນ, ການກູ້ຢືມ, ການຝາກເງິນ ແລະ ການນໍາເງິນສົດເຂົ້າ-ອອກ ສປປ ລາວ.

### ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເງິນຕາ ໝາຍເຖິງ ສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ໃນຮູບແບບ ເງິນຫຼຽນ, ທະນະບັດ, ເອເລັກໂຕຣນິກ ຫຼື ດິຈິຕອນ;

2. ເງິນຕາຕ່າງປະເທດ ໝາຍເຖິງ ເງິນຕາສະກຸນອື່ນທີ່ຮັບຮູ້ ແລະ ນໍາໃຊ້ຢ່າງເປັນທາງການຕາມກົດໝາຍຂອງເຂດປົກຄອງ, ປະເທດ ແລະ ພາກພື້ນ ທີ່ກ່ຽວຂ້ອງ;

3. **ຄຳ** ໝາຍເຖິງ ຄຳແທ່ງ, ຄຳເມັດ ແລະ ຄຳຮູບແບບອື່ນ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ;

4. **ການລົງທຶນ** ໝາຍເຖິງ ການລົງທຶນໂດຍກົງ ແລະ ການລົງທຶນໃນຫຼັກຊັບ;

5. **ອັດຕາແລກປ່ຽນ** ໝາຍເຖິງ ຄ່າຂອງເງິນສະກຸນໜຶ່ງທຽບໃສ່ຄ່າຂອງເງິນສະກຸນອື່ນ;

6. **ການຄອບຄອງ** ໝາຍເຖິງການຮັກສາເງິນຕາໄວ້ໃນຮູບແບບ ເງິນສົດ, ເງິນໃນບັນຊີ ແລະ ເງິນໃນຮູບແບບອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;

7. **ຜູ້ມີພູມລຳເນົາ ຢູ່ ສປປ ລາວ** ໝາຍເຖິງ:

- ພົນລະເມືອງລາວ ທີ່ຢູ່ ສປປ ລາວ;
- ພົນລະເມືອງລາວ ທີ່ໄປ ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ;
- ພົນລະເມືອງລາວ ທີ່ໄປຢູ່ຕ່າງປະເທດ ບໍ່ເກີນ ໜຶ່ງປີ ຍົກເວັ້ນ ເຈົ້າໜ້າທີ່ ຫຼື ພະນັກງານລາວ ທີ່ປະຈຳຢູ່ສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວ ຢູ່ຕ່າງປະເທດ;
- ອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມຂອງ ສປປ ລາວ ທີ່ເຄື່ອນໄຫວຢູ່ພາຍໃນ ແລະ ຕ່າງປະເທດ;
- ບຸກຄົນ, ນິຕິບຸກຄົນລາວ ຫຼື ຕ່າງປະເທດ ທີ່ຢູ່ ສປປ ລາວ ຊຶ່ງໄດ້ຮັບອະນຸຍາດດຳເນີນທຸລະກິດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ລວມທັງຫ້ອງການຕົວແທນຂອງນິຕິບຸກຄົນດັ່ງກ່າວ ທີ່ຕັ້ງຢູ່ຕ່າງປະເທດ ບໍ່ເກີນ ໜຶ່ງປີ;
- ຄົນຕ່າງປະເທດທີ່ເຄື່ອນໄຫວວຽກງານ ຢູ່ ສປປ ລາວ ເກີນ ໜຶ່ງປີ ຊຶ່ງບໍ່ແມ່ນເຈົ້າໜ້າທີ່ ຫຼື ພະນັກງານຂອງສະຖານທູດ, ສະຖານກົງສຸນ ຂອງຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ;
- ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ທຳມາຫາກິນຢ່າງຖາວອນ ຢູ່ ສປປ ລາວ.

8. **ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ** ໝາຍເຖິງ:

- ບຸກຄົນ ແລະ ນິຕິບຸກຄົນ ຕ່າງປະເທດ ທີ່ຢູ່ຕ່າງປະເທດ;
- ຄົນຕ່າງປະເທດທີ່ມາ ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ ສປປ ລາວ;
- ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ, ສຳນັກງານຜູ້ຕາງໜ້າປະຈຳອົງການຈັດຕັ້ງສາກົນ ແລະ ເຈົ້າໜ້າທີ່ ຫຼື ພະນັກງານຕ່າງປະເທດ ຂອງອົງການຈັດຕັ້ງດັ່ງກ່າວ, ທີ່ປຶກສາ, ຜູ້ຊ່ຽວຊານຕ່າງປະເທດ ທີ່ມາປະຈຳຢູ່ ສປປ ລາວ ລວມທັງຄອບຄົວຂອງພວກກ່ຽວ;
- ຄົນຕ່າງປະເທດທີ່ມາຢູ່ ສປປ ລາວ ບໍ່ເກີນ ໜຶ່ງປີ;
- ຫ້ອງການຕົວແທນຂອງນິຕິບຸກຄົນຕ່າງປະເທດ ທີ່ມາຕັ້ງຢູ່ ສປປ ລາວ ບໍ່ເກີນ ໜຶ່ງປີ;
- ພົນລະເມືອງລາວທີ່ໄປຢູ່ຕ່າງປະເທດ ເກີນ ໜຶ່ງປີ ຊຶ່ງບໍ່ແມ່ນການໄປ ສຶກສາ ຫຼື ປິ່ນປົວສຸຂະພາບ.

9. **ຜູ້ໃຫ້ບໍລິການຊຳລະ** ໝາຍເຖິງ ທະນາຄານທຸລະກິດ, ສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ບໍລິການຊຳລະໂດຍກົງແກ່ຜູ້ໃຊ້ບໍລິການ ຊຶ່ງມີລະບົບການຊຳລະທີ່ເປັນຂອງຕົນ ຫຼື ທີ່ເຊື່ອມຕໍ່ກັບລະບົບການຊຳລະຂອງຜູ້ຄວບຄຸມລະບົບການຊຳລະອື່ນ;

10. **ການ ຊື້ ຂາຍ ເງິນຕາຕ່າງປະເທດຮູບແບບທັນທີ (Spot)** ໝາຍເຖິງ ການ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງຄູ່ສັນຍາ ເປັນສະກຸນເງິນຕ່າງປະເທດໃດໜຶ່ງກັບສະກຸນເງິນກີບໃນຈຳນວນເງິນ ແລະ ນຳໃຊ້ອັດຕາແລກ ປ່ຽນໃນເວລາດຳເນີນທຸລະກຳຕົວຈິງ;

11. **ສັນຍາ ຊື້ ຂາຍ ຝາກເງິນຕາຕ່າງປະເທດ (Swaps)** ໝາຍເຖິງ ສັນຍາລະຫວ່າງຄູ່ສັນຍາສອງຝ່າຍ ເພື່ອແລກປ່ຽນການ ຊື້ ຫຼື ຂາຍ ຝາກເງິນຕາຕ່າງປະເທດສະກຸນໃດໜຶ່ງກັບສະກຸນເງິນກີບ ໃນອັດຕາແລກປ່ຽນທັນທີຂອງວັນເຮັດສັນຍາ ໂດຍມີສັນຍາວ່າ ຈະຂາຍ ຫຼື ຈະຊື້ ເງິນຕາຕ່າງປະເທດຈຳນວນດັ່ງກ່າວຄືນ ໃນວັນຄົບກຳນົດສັນຍາ ຕາມອັດຕາແລກປ່ຽນລ່ວງໜ້າ ທີ່ໄດ້ກຳນົດໄວ້ໃນສັນຍາ;

12. **ສັນຍາ ຊື້ ຂາຍ ເງິນຕາຕ່າງປະເທດແບບລ່ວງໜ້າ (Forwards)** ໝາຍເຖິງ ສັນຍາລະຫວ່າງຄູ່ສັນຍາສອງຝ່າຍ ເພື່ອ ຊື້ ຂາຍ ເງິນຕາຕ່າງປະເທດສະກຸນໃດໜຶ່ງກັບສະກຸນເງິນກີບ ແບບລ່ວງໜ້າ ໂດຍມີການກຳນົດອັດຕາແລກປ່ຽນລ່ວງໜ້າ, ຈຳນວນເງິນກີບ, ຈຳນວນເງິນຕາຕ່າງປະເທດ, ວັນທີສົ່ງມອບ ແລະ ເງື່ອນໄຂອື່ນທີ່ໄດ້ຕົກລົງກັນໄວ້ລ່ວງໜ້າ. ອັດຕາແລກປ່ຽນລ່ວງໜ້າທີ່ກຳນົດນັ້ນ ອາດຈະ ສູງ ຫຼື ຕ່ຳ ກວ່າອັດຕາແລກປ່ຽນຂອງຕະຫຼາດທີ່ແທ້ຈິງໃນວັນທີສົ່ງມອບ;

13. **ສັນຍາສິດໃນການ ຊື້ ຂາຍ ເງິນຕາຕ່າງປະເທດ (Options)** ໝາຍເຖິງ ສັນຍາລະຫວ່າງຄູ່ສັນຍາສອງຝ່າຍ ໂດຍຝ່າຍຂາຍສິດ ຈະໃຫ້ສິດແກ່ຝ່າຍຊື້ສິດ ໃນການແລກປ່ຽນສະກຸນເງິນກີບກັບສະກຸນເງິນຕາຕ່າງປະເທດໃດໜຶ່ງທີ່ໃຊ້ອ້າງອີງ ຊຶ່ງຈະມີການສົ່ງມອບກັນໃນອະນາຄົດ ຕາມຈຳນວນເງິນ, ໄລຍະເວລາ ແລະ ອັດຕາແລກປ່ຽນ ຫຼື ເອີ້ນວ່າ ອັດຕາໃຊ້ສິດ ທີ່ກຳນົດໄວ້ລ່ວງໜ້າໃນວັນເຮັດສັນຍາ. ຝ່າຍຊື້ສິດ ຈະບໍ່ມີພັນທະຜູກພັນ, ສາມາດເລືອກທີ່ຈະໃຊ້ສິດ ຫຼື ບໍ່ໃຊ້ສິດ ຕາມສັນຍາກໍໄດ້, ສຳລັບຝ່າຍຂາຍສິດ ແມ່ນມີພັນທະຕ້ອງໄດ້ປະຕິບັດຕາມສັນຍາຫາກຝ່າຍຊື້ສິດເລືອກຈະໃຊ້ສິດດັ່ງກ່າວ ຊຶ່ງຝ່າຍຂາຍສິດ ບໍ່ມີສິດຍົກເລີກການ ຊື້ ຫຼື ຂາຍ ເງິນຕາຕ່າງປະເທດດັ່ງກ່າວ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ**

ລັດ ຄຸ້ມຄອງເງິນຕາຕ່າງປະເທດດ້ວຍກົດໝາຍ, ການວາງນະໂຍບາຍ ແລະ ລະບຽບການ ເພື່ອດັດສົມການນຳໃຊ້ເງິນຕາຕ່າງປະເທດຂອງສັງຄົມ ໃຫ້ມີການປະຢັດ, ເກີດປະໂຫຍດສູງສຸດ ແລະ ການສະສົມເງິນຕາຕ່າງປະເທດໃຫ້ເພີ່ມຂຶ້ນ.

ລັດ ຊຸກຍູ້ ປຸກລະດົມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນ ເຂົ້າຮ່ວມໃນການຄຸ້ມຄອງເງິນຕາຕ່າງປະເທດ ໂດຍການນຳໃຊ້ເງິນຕາຕ່າງປະເທດໃຫ້ສອດຄ່ອງຕາມກົດໝາຍ.

ລັດ ເອົາໃຈໃສ່ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ສະໜອງຂໍ້ມູນ ຂ່າວສານ ໃຫ້ທົ່ວປວງຊົນ ຮູ້ ແລະ ເຂົ້າໃຈກ່ຽວກັບຫຼັກການໃນການຄອບຄອງ ແລະ ນຳໃຊ້ເງິນຕາຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ.

ລັດ ສົ່ງເສີມການຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການສ້າງເງື່ອນໄຂສະດວກ, ປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນ ໃຫ້ແກ່ອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ**

ການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

2. ລວມສູນ ເປັນເອກະພາບ ແລະ ມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ;

3. ມີວິທະຍາສາດ, ເດັດຂາດ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ຮັບປະກັນຄວາມເປັນເອກະລາດ ແລະ ສະຖຽນລະພາບ ທາງດ້ານເງິນຕາ;

5. ທຸກພາກສ່ວນໃນສັງຄົມ ມີພັນທະປະກອບສ່ວນໃນການຈັດຕັ້ງປະຕິບັດ ໃຫ້ການຮ່ວມມື ແລະ ມີສ່ວນຮ່ວມໃນການຄຸ້ມຄອງເງິນຕາຕ່າງປະເທດ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ທີ່ເຄື່ອນໄຫວທຸລະກຳກ່ຽວກັບເງິນຕາຕ່າງປະເທດ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ, ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການແລກປ່ຽນຂໍ້ມູນ ຂ່າວສານ, ບົດຮຽນ, ປະສົບການ, ເຕັກນິກວິຊາການ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ແລະ ປະຕິບັດຕາມ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ການຄຸ້ມຄອງ ແລະ ການນຳໃຊ້ ເງິນຕາຕ່າງປະເທດ ຢູ່ ສປປ ລາວ

**ມາດຕາ 8 (ປັບປຸງ) ການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດຄອບຄອງເງິນຕາຕ່າງປະເທດ ທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ດ້ວຍການເປີດບັນຊີເງິນຝາກໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ ແລະ/ຫຼື ຖືຄອງ ເປັນເງິນສົດ ຕາມລະບຽບການ.

ລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ແລະ ເຄື່ອນໄຫວຜ່ານກະຊວງການເງິນໃຫ້ຝາກໄວ້ນຳທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດ ຫຼັກການ, ລະບຽບການ ກ່ຽວກັບການເປີດບັນຊີເງິນຝາກຂອງຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ.

**ມາດຕາ 9 (ປັບປຸງ) ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄອບຄອງເງິນຕາຕ່າງປະເທດ ກ່ອນຈະນຳໃຊ້ເຂົ້າໃນການຮັບຊຳລະ ແລະ ຊຳລະຄ່າ ສິນຄ້າ, ບໍລິການ, ໜີ້ສິນ, ເງິນປັນຜົນ, ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານ ແລະ ປະຕິບັດພັນທະຕໍ່ລັດ ໃນ ສປປ ລາວ ຕ້ອງແລກປ່ຽນເປັນເງິນກີບ ຊຶ່ງການແລກປ່ຽນດັ່ງກ່າວ ຕ້ອງດຳເນີນຢູ່ທະນາຄານທຸລະກິດເທົ່ານັ້ນ.

ສຳລັບລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ເມື່ອຕ້ອງການນຳໃຊ້ຢູ່ພາຍໃນປະເທດ ຕ້ອງຂາຍເງິນຕາຕ່າງປະເທດໃຫ້ທະນາຄານແຫ່ງ ສປປ ລາວ ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະວັນ.

ການກຳນົດມູນຄ່າ, ການຕິດປະກາດ ແລະ ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ, ເງິນເດືອນ ຫຼື ຄ່າແຮງງານ ແລະ ອື່ນໆ ໃນ ສປປ ລາວ ຕ້ອງເປັນເງິນກີບ. ທຸກການກຳນົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ໃຫ້ຖືເອົາສະກຸນເງິນກີບ ເປັນພື້ນຖານໃນການຄິດໄລ່ໂຄງປະກອບລາຄາດັ່ງກ່າວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ເພື່ອກຳນົດເປົ້າໝາຍສະເພາະ ທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ ເປັນຕົ້ນ ເຂດເສດຖະກິດພິເສດ, ເຂດການຄ້າຊາຍ

ແດນ, ຮ້ານຄ້າປອດພາສີ ລວມທັງການປະຕິບັດພັນທະຕໍ່ລັດຂອງຫົວໜ່ວຍວິສາຫະກິດທີ່ມີລາຍຮັບເປັນເງິນຕາຕ່າງປະເທດ.

ການນຳໃຊ້ເງິນຕາຕ່າງປະເທດ ສຳລັບເປົ້າໝາຍສະເພາະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ການຊຳລະກັບຕ່າງປະເທດ

### ມາດຕາ 10 (ໃໝ່) ການຊຳລະກັບຕ່າງປະເທດ

ການຊຳລະກັບຕ່າງປະເທດ ແມ່ນ ການເຄື່ອນໄຫວທຸລະກຳທາງດ້ານເງິນຕາ ທີ່ຕິດພັນກັບການຄ້າ ແລະ ການບໍລິການກັບຕ່າງປະເທດ, ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າ, ການລົງທຶນໂດຍກົງ, ການລົງທຶນໃນຫຼັກຊັບ, ການກູ້ຢືມ, ການຝາກເງິນລະຫວ່າງປະເທດ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ.

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດນຳໃຊ້ເງິນຕາຕ່າງປະເທດ ເພື່ອເປົ້າໝາຍດຳເນີນທຸລະກຳ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ດ້ວຍການຊຳລະຜ່ານລະບົບທະນາຄານ ຫຼື ຜູ້ໃຫ້ບໍລິການຊຳລະລະຫວ່າງປະເທດ.

## ໝວດທີ 1
## ການຄ້າ ແລະ ການບໍລິການ ກັບຕ່າງປະເທດ

### ມາດຕາ 11 (ໃໝ່) ການຄ້າ ແລະ ການບໍລິການ ກັບຕ່າງປະເທດ

ການຄ້າ ແລະ ການບໍລິການ ກັບຕ່າງປະເທດ ແມ່ນ ການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ/ຫຼື ການບໍລິການ ຂອງ ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ທີ່ພາໃຫ້ມີທຸລະກຳການຊຳລະເງິນຕາ.

ການບໍລິການ ປະກອບດ້ວຍ ການບໍລິການດ້ານການ ທ່ອງທ່ຽວ, ສຶກສາ, ສາທາລະນະສຸກ, ປະກັນໄພ, ຂົນສົ່ງ, ໂທລະຄົມມະນາຄົມ, ແຮງງານ ແລະ ການບໍລິການອື່ນ.

### ມາດຕາ 12 (ໃໝ່) ການຊຳລະການຄ້າ ແລະ ການບໍລິການ ກັບຕ່າງປະເທດ

ຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ທີ່ມີພູມລຳເນົາ ຢູ່ ສປປ ລາວ ຕ້ອງມີບັນຊີເງິນຝາກສະເພາະ ເພື່ອຮອງຮັບການຊຳລະການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ.

ຜູ້ນຳເຂົ້າ ສິນຄ້າ ແລະ ການບໍລິການ ຕ້ອງດຳເນີນການຊຳລະຄ່າສິນຄ້າ ແລະ ການບໍລິການ ຜ່ານບັນຊີເງິນຝາກສະເພາະ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ແລະ ສາມາດສະເໜີຊື້ເງິນຕາຕ່າງປະເທດນຳທະນາຄານທຸລະກິດທີ່ຕົນເປີດບັນຊີເງິນຝາກສະເພາະດັ່ງກ່າວ. ທະນາຄານທຸລະກິດ ພິຈາລະນາຂາຍເງິນຕາຕ່າງປະເທດ ຕາມລາຍການສິນຄ້ານຳເຂົ້າບຸລິມະສິດ ແລະ ສອດຄ່ອງກັບເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ຜູ້ສົ່ງອອກສິນຄ້າ ແລະ ການບໍລິການ ຕ້ອງໂອນລາຍຮັບທັງໝົດຈາກການສົ່ງອອກ ເຂົ້າມາ ສປປ ລາວ ຜ່ານບັນຊີເງິນຝາກສະເພາະ ຢູ່ ສປປ ລາວ, ພ້ອມທັງຂາຍເງິນຕາຕ່າງປະເທດທີ່ໂອນເຂົ້າບັນຊີດັ່ງກ່າວໃຫ້ທະນາຄານທຸລະກິດທີ່ຕົນເປີດບັນຊີເງິນຝາກສະເພາະນັ້ນ ຕາມລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີຜູ້ສົ່ງອອກສິນຄ້າ ແລະ ການບໍລິການ ມີຄວາມຈຳເປັນຊຳລະ ຄ່າວັດຖຸດິບ, ຄ່າອຸປະກອນການຜະລິດ ຫຼື ຄ່າບໍລິການ ຕິດພັນກັບການຜະລິດ ເພື່ອສົ່ງອອກ ສາມາດສະເໜີຊື້ເງິນຕາຕ່າງປະເທດ ນຳທະນາຄານທຸລະກິດດັ່ງກ່າວ.

ທະນາຄານທຸລະກິດທີ່ໃຫ້ບໍລິການເປີດບັນຊີເງິນຝາກສະເພາະ ຕ້ອງປະຕິບັດຕາມ ຫຼັກການ, ມາດຕະຖານ ແລະ ເງື່ອນໄຂ ໃນການຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການນໍາເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດ ຫຼັກການ, ວິທີການ, ເງື່ອນໄຂ ລວມທັງ ອັດຕາສ່ວນ ແລະ ເວລາ ກ່ຽວກັບການຄຸ້ມຄອງລາຍຮັບຈາກການສົ່ງອອກ ແລະ ການສະໜອງເງິນຕາຕ່າງປະເທດໃຫ້ແກ່ການນໍາເຂົ້າສິນຄ້າ ແລະ ການບໍລິການກັບຕ່າງປະເທດ.

## ໝວດທີ 2
## ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າ ລະຫວ່າງປະເທດ

### ມາດຕາ 13 (ໃໝ່) ລາຍຮັບລະຫວ່າງປະເທດ

ລາຍຮັບລະຫວ່າງປະເທດ ປະກອບດ້ວຍ ເງິນຊ່ວຍເຫຼືອລ້າ, ລາຍຮັບຂອງຜູ້ອອກແຮງງານ ແລະ ລາຍຮັບອື່ນ. ລາຍຮັບລະຫວ່າງປະເທດ ຕ້ອງໂອນເຂົ້າ-ອອກ ສປປ ລາວ ຜ່ານຜູ້ໃຫ້ບໍລິການຊໍາລະ.

### ມາດຕາ 14 (ປັບປຸງ) ເງິນຊ່ວຍເຫຼືອລ້າລະຫວ່າງປະເທດ

ເງິນຊ່ວຍເຫຼືອລ້າລະຫວ່າງປະເທດ ແມ່ນ ເງິນທີ່ຮັບ ຫຼື ໃຫ້ການຊ່ວຍເຫຼືອ ໂດຍບໍ່ມີພັນທະໃຊ້ແທນຄືນ ຊຶ່ງປະກອບດ້ວຍ ເງິນຊ່ວຍເຫຼືອລ້າຂອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນ.

ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງການເງິນ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຊ່ວຍເຫຼືອລ້າຢ່າງລວມສູນ ພ້ອມທັງແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປ ລາວ.

ເງິນທີ່ໄດ້ຮັບຈາກການຊ່ວຍເຫຼືອລ້າ ຕ້ອງໂອນຜ່ານຜູ້ໃຫ້ບໍລິການຊໍາລະເຂົ້າບັນຊີເງິນຝາກຂອງພາກສ່ວນກ່ຽວຂ້ອງທີ່ເປີດນໍາທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ, ທະນາຄານທຸລະກິດດັ່ງກ່າວ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງໃຫ້ເງິນຊ່ວຍເຫຼືອລ້າແກ່ຕ່າງປະເທດ ຕ້ອງດໍາເນີນຜ່ານລະບົບທະນາຄານ ຢູ່ ສປປ ລາວ.

### ມາດຕາ 15 (ໃໝ່) ລາຍຮັບຂອງຜູ້ອອກແຮງງານ

ລາຍຮັບຂອງຜູ້ອອກແຮງງານ ປະກອບດ້ວຍ ເງິນເດືອນ ຫຼື ເງິນແຮງງານ, ເງິນໂບນັດ, ເງິນນະໂຍບາຍສະຫວັດດີການ ແລະ ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກ ຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ ສາມາດໂອນເງິນລາຍຮັບໄປຕ່າງປະເທດ ຜ່ານຜູ້ໃຫ້ບໍລິການຊໍາລະ ດ້ວຍການປະກອບເອກະສານທີ່ກ່ຽວຂ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

ຜູ້ອອກແຮງງານລາວທີ່ອອກໄປເຮັດວຽກຢູ່ຕ່າງປະເທດ ຕ້ອງໂອນເງິນລາຍຮັບເຂົ້າ ສປປ ລາວ ຜ່ານຜູ້ໃຫ້ບໍລິການຊໍາລະ ທີ່ເປີດບັນຊີເງິນຝາກນໍາທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ.

ທະນາຄານທຸລະກິດ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

### ມາດຕາ 16 (ໃໝ່) ລາຍຮັບອື່ນລະຫວ່າງປະເທດ

ລາຍຮັບອື່ນລະຫວ່າງປະເທດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຕົ້ນ ລາຍຮັບຈາກການປະກັນໄພ, ຂອງຂວັນ, ເງິນລາງວັນ ຕ້ອງໂອນເຂົ້າ-ອອກ ສປປ ລາວ ຜ່ານຜູ້ໃຫ້ບໍລິການຊໍາລະ.

## ໝວດທີ 3
## ການລົງທຶນໂດຍກົງລະຫວ່າງປະເທດ

### ມາດຕາ 17 (ໃໝ່) ການລົງທຶນໂດຍກົງລະຫວ່າງປະເທດ

ການລົງທຶນໂດຍກົງລະຫວ່າງປະເທດ ແມ່ນ ການນຳທຶນເຂົ້າມາດຳເນີນທຸລະກິດ ຢູ່ ສປປ ລາວ ຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ຫຼື ການນຳທຶນອອກໄປລົງທຶນຢູ່ຕ່າງປະເທດຂອງຜູ້ມີພູມລຳເນົາ ຢູ່ ສປປ ລາວ ຊຶ່ງເຮັດໃຫ້ຜູ້ລົງທຶນກາຍເປັນເຈົ້າຂອງທຸລະກິດຕາມກົດໝາຍ.

ສຳລັບທຶນທີ່ນຳເຂົ້າ ສປປ ລາວ ນັ້ນ ແມ່ນ ທຶນທັງໝົດ ລວມທັງທຶນຈົດທະບຽນ ໃນຮູບແບບທຶນມີເອງ ແລະ/ຫຼື ທຶນກູ້ຢືມ ຊຶ່ງສາມາດນຳເຂົ້າມາເປັນເງິນ ແລະ/ຫຼື ເປັນວັດຖຸ ຕາມກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 18 (ປັບປຸງ) ການນຳທຶນເຂົ້າມາລົງທຶນໂດຍກົງ ຢູ່ ສປປ ລາວ

ຜູ້ລົງທຶນຕ່າງປະເທດ ຕ້ອງນຳທຶນຈົດທະບຽນ ແລະ ທຶນທັງໝົດເຂົ້າມາ ສປປ ລາວ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ. ພາຍຫຼັງໄດ້ແຈ້ງຂຶ້ນທະບຽນວິສາຫະກິດແລ້ວ ຜູ້ລົງທຶນຕ່າງປະເທດ ຕ້ອງເປີດບັນຊີເງິນຝາກສະເພາະ ນຳທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ເພື່ອຮອງຮັບເງິນລົງທຶນດັ່ງກ່າວ. ທຸກທຸລະກຳທາງດ້ານການເງິນຂອງຜູ້ລົງທຶນຕ່າງປະເທດ ຕ້ອງດຳເນີນຜ່ານບັນຊີເງິນຝາກສະເພາະເທົ່ານັ້ນ ເປັນຕົ້ນ ການນຳທຶນເຂົ້າ ສປປ ລາວ; ການໂອນ ເງິນກຳໄລ, ເງິນປັນຜົນ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ໄປຕ່າງປະເທດ. ໃນກໍລະນີຖືເງິນສົດເຂົ້າມາລົງທຶນ ຕ້ອງມີໃບຢັ້ງຢືນແຈ້ງເງິນສົດຈາກເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ແລະ ເອກະສານທີ່ກ່ຽວຂ້ອງ.

ພາຍຫຼັງນຳທຶນຈົດທະບຽນ ແລະ ທຶນທັງໝົດເຂົ້າ ສປປ ລາວ ໃນແຕ່ລະຄັ້ງ ຕ້ອງນຳເອກະສານມາຢັ້ງຢືນນຳທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີ່ໄດ້ນຳທຶນເຂົ້າ ສປປ ລາວ ເປັນຕົ້ນໄປ.

ຜູ້ລົງທຶນຕ່າງປະເທດ ທີ່ຕ້ອງການນຳໃຊ້ເງິນທຶນໃນບັນຊີເງິນຝາກສະເພາະ ຢູ່ ສປປ ລາວ ຕ້ອງຂາຍເງິນຕາຕ່າງປະເທດໃຫ້ແກ່ທະນາຄານທີ່ຕົນເປີດບັນຊີເງິນຝາກສະເພາະ ແລະ ສາມາດຊື້ເງິນຕາຕ່າງປະເທດນຳທະນາຄານທຸລະກິດດັ່ງກ່າວ ເພື່ອໂອນຊຳລະກັບຕ່າງປະເທດ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານທຸລະກິດ ທີ່ເປີດບັນຊີເງິນຝາກສະເພາະ ມີໜ້າທີ່ຕິດຕາມການນຳທຶນເຂົ້າ-ອອກ ສປປ ລາວ ຂອງຜູ້ລົງທຶນ, ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ແລະ ປະຕິບັດເງື່ອນໄຂໃນການໃຫ້ບໍລິການ ຕາມລະບຽບການ.

### ມາດຕາ 19 (ປັບປຸງ) ການນຳທຶນອອກໄປລົງທຶນໂດຍກົງຢູ່ຕ່າງປະເທດ

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ທີ່ຕ້ອງການນຳທຶນອອກໄປລົງທຶນໂດຍກົງຢູ່ຕ່າງປະເທດ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍໃຫ້ສອດຄ່ອງກັບນະໂຍບາຍ ແລະ ແຜນການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ.

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ຕ້ອງເປີດບັນຊີເງິນຝາກສະເພາະ ເພື່ອຮອງຮັບການລົງທຶນນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ເພື່ອໂອນເງິນລົງທຶນ ແລະ ລາຍຮັບຈາກການລົງທຶນຢູ່ຕ່າງປະເທດຂອງຕົນກັບຄືນປະເທດ.

ທະນາຄານທຸລະກິດທີ່ໃຫ້ບໍລິການບັນຊີເງິນຝາກສະເພາະເພື່ອຮອງຮັບການລົງທຶນໂດຍກົງຢູ່ຕ່າງປະເທດຕ້ອງປະຕິບັດຕາມເງື່ອນໄຂທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

ລັດຖະບານ ກຳນົດນະໂຍບາຍ ແລະ ສ້າງແຜນການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ ເພື່ອຮັບປະກັນສະຖຽນລະພາບເງິນຕາ ແລະ ຄວາມເຂັ້ມແຂງຂອງຄັງສຳຮອງເງິນຕາຕ່າງປະເທດ.

## ໝວດທີ 4
## ການລົງທຶນໃນຫຼັກຊັບ

**ມາດຕາ 20 (ໃໝ່) ການລົງທຶນໃນຫຼັກຊັບ**

ການລົງທຶນໃນຫຼັກຊັບ ແມ່ນ ການນໍາເງິນທຶນເຂົ້າມາລົງທຶນໃນຫຼັກຊັບປະເພດທຶນ ແລະ ປະເພດໜີ້ ຢູ່ ສປປ ລາວ ຂອງຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ ຫຼື ການນໍາເອົາທຶນໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຜູ້ມີພູມລໍາເນົາ ຢູ່ ສປປ ລາວ.

**ມາດຕາ 21 (ໃໝ່) ການລົງທຶນໃນຫຼັກຊັບ ຢູ່ ສປປ ລາວ**

ຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ ທີ່ມີຈຸດປະສົງນໍາເງິນທຶນເຂົ້າມາລົງທຶນໃນຫຼັກຊັບ ຢູ່ ສປປ ລາວ ຕ້ອງເປີດບັນຊີເງິນຝາກນໍາທະນາຄານທຸລະກິດ ຢູ່ ສປປ ລາວ ເພື່ອຮອງຮັບການລົງທຶນໃນຫຼັກຊັບ ຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ ທີ່ໄດ້ລົງທຶນໃນຫຼັກຊັບ ຢູ່ ສປປ ລາວ ສາມາດໂອນ ເງິນຕົ້ນທຶນ, ເງິນປັນຜົນ ແລະ ກໍາໄລກັບຄືນປະເທດ ຜ່ານບັນຊີເງິນຝາກທີ່ເປີດໄວ້ຮອງຮັບການລົງທຶນໃນຫຼັກຊັບຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນເຈົ້າການກໍານົດແຜນການເຄື່ອນໄຫວ ແລະ ປະລິມານການລົງທຶນໃນຕະຫຼາດທຶນ ເພື່ອເປັນຂໍ້ມູນສະໜອງໃຫ້ທະນາຄານແຫ່ງ ສປປ ລາວ.

**ມາດຕາ 22 (ໃໝ່) ການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ຜູ້ມີພູມລໍາເນົາ ຢູ່ ສປປ ລາວ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນໍາຄະນະກໍາມະການຄຸ້ມຄອງຫຼັກຊັບ ຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ມີພູມລໍາເນົາ ຢູ່ ສປປ ລາວ ທີ່ໄດ້ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງໂອນ ຕົ້ນທຶນ, ເງິນປັນຜົນ, ດອກເບ້ຍ ແລະ ລາຍຮັບອື່ນທີ່ເກີດຈາກການລົງທຶນເຂົ້າມາ ສປປ ລາວ ຜ່ານລະບົບທະນາຄານ.

ຄະນະກໍາມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ສ້າງແຜນຄວາມຕ້ອງການການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ແລະ ຕິດຕາມກວດກາການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ພ້ອມທັງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ.

**ມາດຕາ 23 (ໃໝ່) ການອອກຫຼັກຊັບປະເພດທຶນຢູ່ຕ່າງປະເທດ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກຄະນະກໍາມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈໍາໜ່າຍຫຼັກຊັບປະເພດທຶນຢູ່ຕ່າງປະເທດ ຕ້ອງນໍາທຶນທີ່ລະດົມໄດ້ເຂົ້າມາ ສປປ ລາວ. ໃນກໍລະນີມີຄວາມຈໍາເປັນນໍາໃຊ້ທຶນດັ່ງກ່າວຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນໍາທະນາຄານແຫ່ງ ສປປ ລາວ.

## ໝວດທີ 5
## ການກູ້ຢືມລະຫວ່າງປະເທດ

**ມາດຕາ 24 (ໃໝ່) ການກູ້ຢືມລະຫວ່າງປະເທດ**

ການກູ້ຢືມລະຫວ່າງປະເທດ ປະກອບດ້ວຍ ການກູ້ຢືມຂອງ ລັດຖະບານ ແລະ ພາກສ່ວນອື່ນກັບຕ່າງປະເທດ ໃນຮູບແບບ ກູ້ຢືມໂດຍກົງ, ກູ້ຢືມທາງອ້ອມ ເປັນຕົ້ນ ພັນທະບັດ, ຮຸ້ນກູ້, ສິນເຊື່ອການຄ້າ, ໜັງສືຄໍ້າປະກັນສິນເຊື່ອ.

**ມາດຕາ 25 (ປັບປຸງ) ການກູ້ຢືມເງິນລະຫວ່າງປະເທດຂອງລັດຖະບານ**

ການກູ້ຢືມເງິນຈາກຕ່າງປະເທດຂອງລັດຖະບານ ປະກອບດ້ວຍ ການກູ້ຢືມໂດຍກົງ, ການອອກພັນທະບັດ ແລະ ການຄໍ້າປະກັນເງິນກູ້ ກັບຕ່າງປະເທດຂອງລັດຖະບານ. ການກູ້ຢືມຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ. ກະຊວງການເງິນ ແຈ້ງແຜນການກູ້ຢືມເງິນ, ແຜນຊໍາລະໜີ້ສິນ ແລະ ການຄໍ້າປະກັນເງິນກູ້ດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປ ລາວ.

ເງິນກູ້ຢືມຈາກຕ່າງປະເທດຂອງລັດຖະບານ ຕ້ອງລວມສູນເຂົ້າບັນຊີເງິນຝາກຂອງກະຊວງການເງິນ ຫຼື ບັນຊີໂຄງການຂອງລັດຖະບານ ທີ່ເປີດໄວ້ນໍາທະນາຄານແຫ່ງ ສປປ ລາວ. ເງິນກູ້ດັ່ງກ່າວ ສາມາດນໍາໃຊ້ຊໍາລະກັບຕ່າງປະເທດໂດຍກົງ ຫຼື ແລກປ່ຽນເອົາເງິນກີບນໍາທະນາຄານແຫ່ງ ສປປ ລາວ ເພື່ອນໍາໃຊ້ຢູ່ພາຍໃນປະເທດ.

ການໃຫ້ກູ້ຢືມຂອງລັດຖະບານ ສປປ ລາວ ແກ່ຕ່າງປະເທດ ຕ້ອງປະຕິບັດລວມສູນຢູ່ກະຊວງການເງິນ ໂດຍປະສານສົມທົບກັບທະນາຄານແຫ່ງ ສປປ ລາວ.

**ມາດຕາ 26 (ປັບປຸງ) ການກູ້ຢືມເງິນລະຫວ່າງປະເທດຂອງພາກສ່ວນອື່ນ**

ການກູ້ຢືມເງິນລະຫວ່າງປະເທດຂອງພາກສ່ວນອື່ນ ປະກອບດ້ວຍ ການກູ້ຢືມລະຫວ່າງ ສະຖາບັນການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມ ຢູ່ ສປປ ລາວ ກັບ ຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ.

ສະຖາບັນການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມ ຢູ່ ສປປ ລາວ ທີ່ມີຈຸດປະສົງໃຫ້ ຫຼື ຮັບເງິນກູ້ຢືມລະຫວ່າງປະເທດ ຕ້ອງຂໍອະນຸຍາດນໍາທະນາຄານແຫ່ງ ສປປ ລາວ ຕາມລະບຽບການທີ່ກ່ຽວຂ້ອງ ແລະ ຕ້ອງລາຍງານການຊໍາລະເງິນກູ້ໃຫ້ທະນາຄານແຫ່ງ ສປປ ລາວ ຈົນກວ່າຈະຄືນຖ້ວນຕາມສັນຍາ. ການໃຫ້ ຫຼື ຮັບເງິນກູ້ຢືມດັ່ງກ່າວ ຕ້ອງດໍາເນີນຜ່ານລະບົບທະນາຄານເທົ່ານັ້ນ.

**ມາດຕາ 27 (ໃໝ່) ສິນເຊື່ອການຄ້າລະຫວ່າງປະເທດ**

ສິນເຊື່ອການຄ້າລະຫວ່າງປະເທດ ແມ່ນ ສັນຍາ ຊື້ ຂາຍ ສິນຄ້າ ແລະ ການບໍລິການ ແບບຕິດໜີ້ລະຫວ່າງ ຜູ້ມີພູມລໍາເນົາ ຢູ່ ສປປ ລາວ ກັບ ຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ.

ການໃຫ້ ຫຼື ຮັບ ສິນເຊື່ອການຄ້າລະຫວ່າງປະເທດ ທີ່ມີກໍານົດເວລາ ໜຶ່ງປີ ລົງມາ ໃຫ້ດໍາເນີນການຜ່ານທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ໂດຍກົງ ຕາມນະໂຍບາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກໍານົດ.

ການໃຫ້ ຫຼື ຮັບ ສິນເຊື່ອການຄ້າລະຫວ່າງປະເທດ ທີ່ມີກໍານົດເວລາເກີນ ໜຶ່ງປີ ຕ້ອງຂໍອະນຸຍາດນໍາທະນາຄານແຫ່ງ ສປປ ລາວ ໂດຍຜ່ານທະນາຄານທຸລະກິດ.

ທະນາຄານທຸລະກິດ ຕ້ອງລາຍງານການເຄື່ອນໄຫວກ່ຽວກັບສິນເຊື່ອການຄ້າລະຫວ່າງປະເທດ ໃຫ້ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 28 (ໃໝ່) ໜີ້ສິນຕ່າງປະເທດ**

ໜີ້ສິນຕ່າງປະເທດ ແມ່ນ ພັນທະທາງການເງິນ ທີ່ຜູ້ມີພູມລໍາເນົາ ຢູ່ ສປປ ລາວ ສ້າງຂຶ້ນດ້ວຍການກູ້ຢືມ, ຄໍ້າປະກັນການກູ້ຢືມ, ຮັບສິນເຊື່ອການຄ້າ ຈາກຕ່າງປະເທດ, ອອກພັນທະບັດ ຫຼື ອອກຮຸ້ນກູ້ ໃຫ້ຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ ແລະ ເງິນຝາກຂອງຜູ້ບໍ່ມີພູມລໍາເນົາ ຢູ່ ສປປ ລາວ.

ໜີ້ສິນຕ່າງປະເທດຂອງ ສປປ ລາວ ປະກອບດ້ວຍ:

1. ໜີ້ສິນຂອງພາກລັດ ຊຶ່ງແມ່ນ ໜີ້ສິນສາທາລະນະຕໍ່ຕ່າງປະເທດ;

2. ໜີ້ສິນຂອງສະຖາບັນການເງິນ ຊຶ່ງແມ່ນ ໜີ້ສິນຕໍ່ຕ່າງປະເທດຂອງທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;

3. ໜີ້ສິນຂອງພາກສ່ວນອື່ນ ຊຶ່ງແມ່ນ ໜີ້ສິນຕໍ່ຕ່າງປະເທດຂອງ ອົງການຈັດຕັ້ງສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ແມ່ນສະຖາບັນການເງິນ.

ທະນາຄານແຫ່ງ ສປປ ລາວ ສົມທົບກັບກະຊວງການເງິນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ສັງລວມຂໍ້ມູນ ແລະ ຕິດຕາມສະພາບ ໜີ້ສິນຕໍ່ຕ່າງປະເທດຂອງ ສປປ ລາວ ພ້ອມທັງບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ.

## ມາດຕາ 29 (ໃໝ່) ຍຸດທະສາດຄຸ້ມຄອງໜີ້ສິນຕ່າງປະເທດ

ລັດຖະບານ ມອບໃຫ້ທະນາຄານແຫ່ງ ສປປ ລາວ ສົມທົບກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງຍຸດທະສາດຄຸ້ມຄອງໜີ້ສິນຕ່າງປະເທດ ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ ແນໃສ່ຮັບປະກັນການຄຸ້ມຄອງນຳໃຊ້ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ ເຮັດໃຫ້ຖານະໜີ້ສິນຕ່າງປະເທດຂອງສປປ ລາວ ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້.

ຍຸດທະສາດຄຸ້ມຄອງໜີ້ສິນຕ່າງປະເທດ ຕ້ອງມີເນື້ອໃນ ດັ່ງນີ້:

1. ປະເມີນຖານະໜີ້ສິນຕ່າງປະເທດຂອງ ລັດຖະບານ, ສະຖາບັນການເງິນ ແລະ ພາກສ່ວນອື່ນທີ່ບໍ່ ແມ່ນລັດຖະບານ ແລະ ບໍ່ແມ່ນສະຖາບັນການເງິນ;
2. ກຳນົດທິດທາງລວມ ຄາດໝາຍສູ້ຊົນ ແລະ ຍຸດທະສາດ ໃນການຄຸ້ມຄອງໜີ້ສິນຕ່າງປະເທດ;
3. ກຳນົດອັດຕາສ່ວນໜີ້ສິນຕໍ່ຕ່າງປະເທດ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ບໍ່ໃຫ້ເກີນມາດຕະຖານຄວາມປອດໄພດ້ານໜີ້ສິນ ແລະ ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດໃນແຕ່ລະໄລຍະ;
4. ກຳນົດວິທີການຈັດສັນໜີ້ສິນ ແລະ ແຜນບໍລິຫານສະພາບຄ່ອງໜີ້ສິນໃນແຕ່ລະໄລຍະ;
5. ກຳນົດມາດຕະການ ແລະ ກົນໄກການຈັດຕັ້ງປະຕິບັດ.

ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ສັງລວມສະຖິຕິໜີ້ສິນຕ່າງປະເທດໃຫ້ຄົບຖ້ວນ, ປະເມີນສະພາບໜີ້ສິນດັ່ງກ່າວ ແລະ ລາຍງານໃຫ້ລັດຖະບານ ໃນແຕ່ລະໄລຍະ ເປັນຕົ້ນ ສັນຍາໜີ້ສິນໃໝ່, ຍອດເຫຼືອໜີ້ສິນຕ່າງປະເທດ, ພັນທະຊຳລະໜີ້ສິນຕ່າງປະເທດປະຈຳປີ ແລະ ໂຄງປະກອບໜີ້ສິນ.

# ໝວດທີ 6
# ການຝາກເງິນລະຫວ່າງປະເທດ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ

## ມາດຕາ 30 (ໃໝ່) ການຝາກເງິນຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ

ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດຝາກເງິນເປັນສະກຸນເງິນກີບ ແລະ ເປັນເງິນຕາຕ່າງປະເທດ ນຳທະນາຄານທຸລະກິດ ຢູ່ ສປປ ລາວ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານທຸລະກິດ ຕ້ອງຕິດຕາມ ແລະ ລາຍງານກ່ຽວກັບການຝາກເງິນຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

## ມາດຕາ 31 (ປັບປຸງ) ການຝາກເງິນຢູ່ຕ່າງປະເທດຂອງຜູ້ມີພູມລຳເນົາ ຢູ່ ສປປ ລາວ

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ສາມາດເປີດບັນຊີເງິນຝາກຂອງຕົນຢູ່ຕ່າງປະເທດ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການດຳເນີນທຸລະກິດຂອງທະນາຄານທຸລະກິດ;
2. ການຮອງຮັບເງິນກູ້ ແລະ ຊຳລະເງິນກູ້ ລວມທັງສິນເຊື່ອການຄ້າ ກັບຕ່າງປະເທດ;

3. ການລົງທຶນຢູ່ຕ່າງປະເທດ, ການສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ ຕ່າງປະເທດ ຕາມການອະນຸຍາດຂອງອົງການທີ່ກ່ຽວຂ້ອງ;

4. ເປົ້າໝາຍອື່ນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ຜູ້ທີ່ມີເງິນຝາກຢູ່ຕ່າງປະເທດຕາມທີ່ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຕ້ອງລາຍງານການເຄື່ອນໄຫວບັນຊີເງິນຝາກດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

ສຳລັບ ນັກສຶກສາ, ນັກການທູດ, ພະນັກງານ ທີ່ຖືກມອບໝາຍໃຫ້ໄປເຮັດວຽກ ແລະ ຜູ້ອອກແຮງງານ ຢູ່ຕ່າງປະເທດ ສາມາດເປີດບັນຊີເງິນຝາກຢູ່ຕ່າງປະເທດໂດຍບໍ່ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການນຳໃຊ້ບັນຊີເງິນຝາກຢູ່ຕ່າງປະເທດ.

**ມາດຕາ 32 ການນຳເງິນສົດເຂົ້າ-ອອກ ສປປ ລາວ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນຕາເປັນເງິນສົດເຂົ້າ ສປປ ລາວ ຕາມຈຳນວນທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ຖ້າເກີນຈຳນວນດັ່ງກ່າວ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອອອກເອກະສານຢັ້ງຢືນ.

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນຕາເປັນເງິນສົດອອກ ສປປ ລາວ ຕາມຈຳນວນທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ຖ້າເກີນຈຳນວນດັ່ງກ່າວ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ. ໃນກໍລະນີມີເອກະສານຢັ້ງຢືນກ່ຽວກັບການນຳເງິນຕາເຂົ້າ ສປປ ລາວ ສາມາດແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອນຳເງິນຕານັ້ນອອກ ສປປ ລາວ.

## ພາກທີ IV
## ລະບອບອັດຕາແລກປ່ຽນ, ການບໍລິການເງິນຕາຕ່າງປະເທດ, ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ແລະ ທຸລະກິດຄຳ

**ມາດຕາ 33 (ປັບປຸງ) ລະບອບອັດຕາແລກປ່ຽນ**

ສປປ ລາວ ນຳໃຊ້ລະບອບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ.

ທະນາຄານແຫ່ງ ສປປ ລາວ ກຳນົດອັດຕາແລກປ່ຽນອ້າງອີງ ບົນພື້ນຖານຄາດໝາຍມະຫາພາກດ້ານເງິນຕາໃນແຕ່ລະໄລຍະ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດສະກຸນເງິນຕາຕ່າງປະເທດ ທີ່ສາມາດນຳໃຊ້ ແລະ/ຫຼື ຊື້ ຂາຍເງິນຕາ ຢູ່ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 34 (ໃໝ່) ການບໍລິການເງິນຕາຕ່າງປະເທດ**

ການບໍລິການເງິນຕາຕ່າງປະເທດ ປະກອບດ້ວຍ ການບໍລິການ ໂອນເງິນຕາຕ່າງປະເທດ, ຮັບຝາກເງິນ ແລະ ສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ແລະ ແລກປ່ຽນເງິນຕາ.

ຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ມີໜ້າທີ່ ໂຄສະນາ, ຈັດຝຶກອົບຮົມ, ສຳມະນາ, ເຮັດການຕະຫຼາດ ກ່ຽວກັບການບໍລິການເງິນຕາຕ່າງປະເທດ ໂດຍຜ່ານຊ່ອງທາງຕ່າງໆ ລວມທັງສື່ສັງຄົມອອນລາຍ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 35 (ໃໝ່) ການບໍລິການໂອນເງິນຕາຕ່າງປະເທດ**

ຜູ້ໃຫ້ບໍລິການຊໍາລະທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ ທີ່ສາມາດໃຫ້ບໍລິການໂອນເງິນຕາຕ່າງປະເທດຢູ່ພາຍໃນ ແລະ ລະຫວ່າງປະເທດ. ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດລະບຽບການກ່ຽວກັບຂອບເຂດ ແລະ ເງື່ອນໄຂໃນການໂອນເງິນຕາຕ່າງປະເທດ.

**ມາດຕາ 36 (ໃໝ່) ການບໍລິການຮັບຝາກເງິນ ແລະ ສະໜອງສິນເຊື່ອ ເປັນເງິນຕາຕ່າງປະເທດ**

ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ເທົ່ານັ້ນ ທີ່ສາມາດຮັບຝາກເງິນ ແລະ ສະໜອງສິນເຊື່ອ ເປັນ ເງິນຕາຕ່າງປະເທດ. ຜະລິດຕະພັນເງິນຝາກເປັນເງິນຕາຕ່າງປະເທດ ປະກອບດ້ວຍ ບັນຊີ ເງິນຝາກກະແສລາຍວັນ, ເງິນຝາກປະຢັດ, ເງິນຝາກມີກໍານົດ ແລະ ຜະລິດຕະພັນເງິນຝາກອື່ນ ທີ່ມີ ຫຼື ບໍ່ມີດອກເບ້ຍ. ຜະລິດຕະພັນສິນເຊື່ອເປັນເງິນຕາຕ່າງປະເທດ ປະກອບດ້ວຍ ເງິນກູ້, ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ ແລະ ສິນເຊື່ອປະເພດອື່ນ ເພື່ອຊຸກຍູ້ການຜະລິດສິນຄ້າ ແລະ ການບໍລິການ ທີ່ສາມາດສ້າງລາຍຮັບເປັນເງິນຕາຕ່າງປະເທດ. ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດນະໂຍບາຍ ແລະ ລະບຽບການ ກ່ຽວກັບການຮັບຝາກເງິນ ແລະ ການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ເປັນຕົ້ນ ສະກຸນເງິນຕາຕ່າງປະເທດ, ອັດຕາສ່ວນເງິນແຮຝາກບັງຄັບ, ອັດຕາດອກເບ້ຍ, ອັດຕາເບ້ຍປະກັນເງິນຝາກ ແລະ ວົງເງິນປົກປ້ອງ ໃນແຕ່ລະໄລຍະ.

**ມາດຕາ 37 (ໃໝ່) ການບໍລິການແລກປ່ຽນເງິນຕາ**

ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ເທົ່ານັ້ນ ທີ່ສາມາດໃຫ້ບໍລິການແລກປ່ຽນເງິນຕາ ຊຶ່ງຕ້ອງປະຕິບັດອັດຕາແລກປ່ຽນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ. ການແລກປ່ຽນເງິນຕາຕ່າງປະເທດຈາກສະກຸນໜຶ່ງໄປເປັນສະກຸນອື່ນ ຕ້ອງດໍາເນີນຜ່ານການແລກປ່ຽນເປັນເງິນກີບເສຍກ່ອນ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດ ນະໂຍບາຍ, ຫຼັກການ ແລະ ລະບຽບການ ລວມທັງຂອບເຂດການເຄື່ອນໄຫວກ່ຽວກັບການໃຫ້ບໍລິການແລກປ່ຽນເງິນຕາ.

**ມາດຕາ 38 (ໃໝ່) ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ**

ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ປະກອບດ້ວຍ ຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ແລະ ຕະຫຼາດກູ້ຢືມເງິນຕາຕ່າງປະເທດລະຫວ່າງທະນາຄານ.

ຕະຫຼາດ ຊື້ ຂາຍ ເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນ ຕະຫຼາດທີ່ທະນາຄານທຸລະກິດດໍາເນີນທຸລະກໍາ ຊື້ ຂາຍ ເງິນຕາຕ່າງປະເທດດ້ວຍກັນ. ຜະລິດຕະພັນຂອງຕະຫຼາດດັ່ງກ່າວ ປະກອບດ້ວຍ ການ ຊື້ ຂາຍເງິນຕາຕ່າງປະເທດຮູບແບບທັນທີ ແລະ ອະນຸພັນທາງດ້ານການເງິນ ທີ່ເປັນເງິນຕາຕ່າງປະເທດ ເພື່ອປ້ອງກັນຄວາມສ່ຽງອັດຕາແລກປ່ຽນ ເປັນຕົ້ນ ການ ຊື້ ຂາຍ ຝາກເງິນຕາຕ່າງປະເທດ, ການ ຊື້ ຂາຍ ເງິນຕາຕ່າງປະເທດແບບລ່ວງໜ້າ ແລະ ສັນຍາສິດໃນການ ຊື້ ຂາຍ ເງິນຕາຕ່າງປະເທດ. ຜູ້ເຂົ້າຮ່ວມຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ປະກອບດ້ວຍ ທະນາຄານທຸລະກິດ ແລະ ພາກສ່ວນອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

ຕະຫຼາດກູ້ຢືມເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນ ຕະຫຼາດທີ່ທະນາຄານທຸລະກິດດໍາເນີນທຸລະກໍາການຮັບຝາກ ແລະ ການກູ້ຢືມເງິນຕາຕ່າງປະເທດດ້ວຍກັນ ເພື່ອຈຸດປະສົງບໍລິຫານທຶນ ແລະ ສະພາບຄ່ອງເງິນຕາຕ່າງປະເທດຂອງຕົນ. ຜະລິດຕະພັນຂອງຕະຫຼາດດັ່ງກ່າວ ປະກອບດ້ວຍ ເງິນຝາກ ແລະ ເງິນກູ້ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ເປັນເງິນຕາຕ່າງປະເທດ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດລະບຽບການໃນການຄຸ້ມຄອງ ແລະ ຕິດຕາມກວດກາການເຄື່ອນໄຫວຕະຫຼາດດັ່ງກ່າວ ເປັນຕົ້ນ ສະກຸນເງິນຕາຕ່າງປະເທດ, ການລາຍງານທຸລະກໍາ.

### ມາດຕາ 39 (ໃໝ່) ທຸລະກິດຄໍາ

ທຸລະກິດຄໍາ ປະກອບດ້ວຍ ການນໍາເຂົ້າ, ສົ່ງອອກ, ຊື້ ຂາຍ, ຮັບຝາກ, ໃຫ້ກູ້ ແລະ ຢັ້ງຢືນຄຸນນະພາບ ຂອງຄໍາ.

ບໍລິສັດນໍາເຂົ້າ-ສົ່ງອອກ ຄໍາ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ສາມາດນໍາເຂົ້າ, ສົ່ງອອກ, ຊື້ ຂາຍ ຄໍາທີ່ສາກົນນໍາໃຊ້ເປັນເຄື່ອງມືຊໍາລະລະຫວ່າງປະເທດ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ສະຖາບັນການເງິນສະເພາະ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ສາມາດໃຫ້ບໍລິການກ່ຽວກັບຄໍາ ໃນຮູບແບບ ຊື້ ຂາຍ, ຮັບຝາກ, ໃຫ້ກູ້, ນໍາເຂົ້າ, ສົ່ງອອກ ແລະ ຢັ້ງຢືນຄຸນນະພາບ ຄໍາທີ່ສາກົນນໍາໃຊ້ເປັນເຄື່ອງມືຊໍາລະລະຫວ່າງປະເທດ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

## ພາກທີ V
## ດຸນການຊໍາລະກັບຕ່າງປະເທດ ແລະ ຄັງສໍາຮອງເງິນຕາຕ່າງປະເທດ

### ມາດຕາ 40 (ປັບປຸງ) ດຸນການຊໍາລະກັບຕ່າງປະເທດ

ດຸນການຊໍາລະກັບຕ່າງປະເທດ ແມ່ນ ສະຖິຕິທີ່ສັງລວມທຸລະກໍາການແລກປ່ຽນທາງດ້ານເສດຖະກິດລະຫວ່າງຜູ້ມີ ແລະ ບໍ່ມີ ພູມລໍາເນົາ ຢູ່ ສປປ ລາວ ເປັນຕົ້ນ ການຄ້າກັບຕ່າງປະເທດ, ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າກັບຕ່າງປະເທດ, ການລົງທຶນໂດຍກົງ, ການລົງທຶນໃນຫຼັກຊັບ, ການກູ້ຢືມ, ການຝາກເງິນລະຫວ່າງປະເທດ ໃນໄລຍະເວລາໃດໜຶ່ງ.

ທະນາຄານແຫ່ງ ສປປ ລາວ ຕ້ອງສັງລວມດຸນການຊໍາລະກັບຕ່າງປະເທດ ປະຈໍາໄຕມາດ ແລະ ປີ ໂດຍປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

### ມາດຕາ 41 (ປັບປຸງ) ການສ້າງແຜນດຸນການຊໍາລະກັບຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ສົມທົບກັບກະຊວງ ແລະ ອົງການທີ່ກ່ຽວຂ້ອງ ສ້າງແຜນດຸນການຊໍາລະກັບຕ່າງປະເທດ ເພື່ອໃຫ້ເປັນຂໍ້ມູນໃນການຄຸ້ມຄອງຄັງສໍາຮອງເງິນຕາຕ່າງປະເທດ ແລະ ການຄຸ້ມຄອງເສດຖະກິດມະຫາພາກ ແລະ ລາຍງານຕໍ່ລັດຖະບານ ໃນແຕ່ລະໄລຍະ. ການສ້າງແຜນດຸນການຊໍາລະກັບຕ່າງປະເທດ ຕ້ອງຮັບປະກັນພັນທະຊໍາລະກັບຕ່າງປະເທດ ຂອງ ສປປ ລາວ ໃນແຕ່ລະໄລຍະ.

ຜູ້ມີ ແລະ ບໍ່ມີ ພູມລໍາເນົາ ຢູ່ ສປປ ລາວ ທີ່ມີທຸລະກໍາການເງິນລະຫວ່າງປະເທດ ມີໜ້າທີ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນກ່ຽວກັບທຸລະກໍາດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

### ມາດຕາ 42 (ໃໝ່) ຄັງສໍາຮອງເງິນຕາຕ່າງປະເທດ

ຄັງສໍາຮອງເງິນຕາຕ່າງປະເທດ ແມ່ນ ຊັບສິນທີ່ເປັນອົງປະກອບຖານະການເງິນຂອງທະນາຄານແຫ່ງ ສປປ ລາວ ຊຶ່ງປະກອບດ້ວຍ ເງິນຕາຕ່າງປະເທດ, ພັນທະບັດ, ສິດຖອນເງິນພິເສດ, ເອກະສານມີຄ່າທາງດ້ານການເງິນອື່ນ ທີ່ເປັນເງິນຕາຕ່າງປະເທດ ແລະ ຄໍາທີ່ສາກົນຮັບຮູ້ ແລະ ນໍາໃຊ້ເຂົ້າໃນການຊໍາລະກັບຕ່າງປະເທດ.

ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງບໍລິຫານຄັງສໍາຮອງເງິນຕາຕ່າງປະເທດ ໃຫ້ມີຄວາມເຂັ້ມແຂງ ເພື່ອຕອບສະໜອງໃຫ້ແກ່ການຈັດຕັ້ງປະຕິບັດແຜນເງິນຕາໃນແຕ່ລະໄລຍະ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 43 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການຊຳລະ ແລະ/ຫຼື ຮັບຊຳລະ ຢູ່ ສປປ ລາວ ໂດຍບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

2. ກຳນົດມູນຄ່າ, ຕິດປະກາດ ແລະ/ຫຼື ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ, ກຳນົດໂຄງສ້າງລາຄາ ສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ເປັນເງິນຕາຕ່າງປະເທດ;

3. ໂຄສະນາ ແລະ/ຫຼື ປະກາດ ການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດ ກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບໂດຍຜ່ານຊ່ອງທາງຕ່າງໆ;

4. ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການ ສ້າງຂ່າວປອມ ຫຼື ບິດເບືອນ ຂໍ້ມູນ ຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ;

5. ກຳນົດ ແລະ ຕິດປະກາດ ອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

6. ຊຳລະຄ່າສິນຄ້າ ແລະ ບໍລິການ ຢູ່ພາຍໃນ ແລະ ລະຫວ່າງປະເທດ ດ້ວຍການນຳໃຊ້ລະບົບການຊຳລະທີ່ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ;

7. ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

8. ໃຊ້ບໍລິການເງິນຕາຕ່າງປະເທດ ເປັນຕົ້ນ ແລກປ່ຽນເງິນຕາ, ໂອນເງິນ ກັບບຸກຄົນ, ນິຕິບຸກຄົນອື່ນ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

9. ເປີດ ແລະ ນຳໃຊ້ ບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍສະບັບນີ້;

10. ນຳໃຊ້ບັນຊີເງິນຝາກອື່ນທີ່ບໍ່ແມ່ນບັນຊີເງິນຝາກສະເພາະ ເພື່ອຊຳລະການຄ້າ, ການບໍລິການ ແລະ ການລົງທຶນກັບຕ່າງປະເທດ;

11. ຮັກສາລາຍຮັບຈາກການ ສົ່ງອອກສິນຄ້າ, ການບໍລິການ ແລະ ການລົງທຶນໄວ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;

12. ບໍ່ສະເໜີຂໍຢັ້ງຢືນ ຫຼື ຢັ້ງຢືນເກີນເວລາທີ່ກຳນົດ ໃນການນຳທຶນເຂົ້າ ສປປ ລາວ ນຳທະນາຄານແຫ່ງ ສປປ ລາວ;

13. ນຳທຶນອອກ ສປປ ລາວ ໄປລົງທຶນຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ;

14. ກູ້ຢືມລະຫວ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

15. ບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ໃນກໍລະນີນຳເງິນຕາທີ່ເປັນເງິນສົດເຂົ້າ ສປປ ລາວ ເກີນຈຳນວນທີ່ກຳນົດໄວ້; ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ແລະ ບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ໃນກໍລະນີທີ່ນຳເງິນຕາເປັນເງິນສົດອອກ ສປປ ລາວ ເກີນຈຳນວນທີ່ໄດ້ກຳນົດໄວ້;

16. ປະຕິເສດການສະໜອງຂໍ້ມູນ ຫຼື ສະໜອງຂໍ້ມູນ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ກ່ຽວກັບການເຄື່ອນໄຫວເງິນຕາຕ່າງປະເທດ;

17. ປະຕິເສດການໃຫ້ຄວາມຮ່ວມມື ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ;

18. ເລີ່ນເລີ້ ຫຼື ເມີນເສີຍ ຕໍ່ການຈັດຕັ້ງປະຕິບັດວຽກງານເງິນຕາຕ່າງປະເທດ;

19. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 44 (ປັບປຸງ) ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການເງິນຕາຕ່າງປະເທດ**

ຫ້າມຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ/ຫຼື ຂອບເຂດທີ່ໄດ້ຮັບອະນຸຍາດ;

2. ນຳໃຊ້, ໝູນໃຊ້ ຫຼື ສ້າງເງື່ອນໄຂໃຫ້ ບຸກຄົນ, ນິຕິບຸກຄົນອື່ນ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ການບໍລິການເງິນຕາຕ່າງປະເທດແທນຕົນໂດຍບໍ່ໄດ້ຮັບອະນຸຍາດ;

3. ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນທີ່ບໍ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກັກຕຸນເງິນຕາຕ່າງປະເທດ, ສ້າງຂ່າວປອມ ຫຼື ບິດເບືອນ ຂໍ້ມູນ ຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ;

4. ສົມຮູ້ຮ່ວມຄິດກັບຜູ້ໃຊ້ບໍລິການ ໃນການດຳເນີນທຸລະກຳເງິນຕາຕ່າງປະເທດ ເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຜົນປະໂຫຍດຂອງກຸ່ມຄົນໃດໜຶ່ງ ທີ່ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ໃຫ້ສິນບົນ ແກ່ເຈົ້າໜ້າທີ່ ຫຼື ພະນັກງານຂອງລັດ ທີ່ກ່ຽວຂ້ອງ;

6. ປິດບັງຂໍ້ມູນ, ສະໜອງ ແລະ/ຫຼື ລາຍງານ ຂໍ້ມູນບໍ່ຖືກຕ້ອງ ຫຼື ປອມແປງເອກະສານ ກ່ຽວກັບການເຄື່ອນໄຫວເງິນຕາຕ່າງປະເທດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 45 (ປັບປຸງ) ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ຫຼື ພະນັກງານ ທີ່ກ່ຽວຂ້ອງ ມີພຶດຕິກຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ ແລະ ຫ້າມມີພຶດຕິກຳ ເພີ່ມເຕີມ ດັ່ງນີ້:

1. ເປັນທີ່ປຶກສາ, ເປັນພະນັກງານ ໃຫ້ແກ່ຜູ້ໃຫ້ບໍລິການເງິນຕາຕ່າງປະເທດ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ສົມຮູ້ຮ່ວມຄິດ, ສ້າງເງື່ອນໄຂເພື່ອເອື້ອອຳນວຍ ຫຼື ສ້າງຜົນປະໂຫຍດໃນການເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ພາຍໃນຄວາມຮັບຜິດຊອບຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ;

5. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ/ຫຼື ໝູ່ຄະນະ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ລວມທັງການດຳເນີນທຸລະກຳທີ່ກ່ຽວຂ້ອງ;

6. ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ, ຕໍ່ນິຕິກຳທີ່ບໍ່ຖືກຕ້ອງ ກ່ຽວກັບທຸລະກຳເງິນຕາຕ່າງປະເທດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາ ວຽກງານເງິນຕາຕ່າງປະເທດ
### ໝວດທີ 1
### ການຄຸ້ມຄອງວຽກງານເງິນຕາຕ່າງປະເທດ

**ມາດຕາ 46 (ປັບປຸງ) ອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ**

ລັດຖະບານ ແຫ່ງ ສປປ ລາວ ຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມພາລະບົດບາດ ຂອງຕົນ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ມາເປັນລະບຽບການ, ແຜນການ, ໂຄງການ, ແຜນງານລະອຽດ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ຊີ້ນຳ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ໃນຂອບເຂດທົ່ວປະເທດ ແລະ ປຸກຈິດສຳນຶກໃຫ້ແກ່ສັງຄົມ ໃນການນຳໃຊ້ເງິນຕາໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ;

4. ອະນຸຍາດ, ໂຈະ ຫຼື ຍຸບເລີກ ກ່ຽວກັບການໃຫ້ບໍລິການເງິນຕາຕ່າງປະເທດ ພ້ອມທັງຕິດຕາມກວດກາຫົວໜ່ວຍດັ່ງກ່າວ;

5. ພິຈາລະນາການເປີດບັນຊີເງິນຝາກຢູ່ຕ່າງປະເທດ, ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ຄຸ້ມຄອງ ແລະ ຕິດຕາມ ກວດກາ ກະແສເງິນຕາ ທີ່ຕິດພັນກັບ ການຂຸດຄົ້ນ, ການ ຊື້ ຂາຍ ແລະ ການແລກປ່ຽນ ຊັບສິນດິຈິຕອນ;

7. ສ້າງ, ບຳລຸງ, ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ ກ່ຽວກັບວຽກງານເງິນຕາຕ່າງປະເທດ ໃຫ້ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງຕົນ;

8. ພັດທະນາ ແລະ ນຳໃຊ້ລະບົບ ຂໍ້ມູນ ຂ່າວສານ ທີ່ທັນສະໄໝ, ສຳຫຼວດ, ເກັບກຳ, ວິເຄາະ, ປະເມີນ ແລະ ສັງລວມ ຂໍ້ມູນ ໃນການຄຸ້ມຄອງເງິນຕາຕ່າງປະເທດຢ່າງເປັນລະບົບ;

9. ນຳໃຊ້ມາດຕະການທາງບໍລິຫານຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເງິນຕາຕ່າງປະເທດ;

10. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ແຜນການ ກ່ຽວກັບວຽກງານເງິນຕາຕ່າງປະເທດ;

11. ພົວພັນຮ່ວມມືກັບຕ່າງປະເທດ, ອະນຸພາກພື້ນ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເງິນຕາຕ່າງປະເທດ;

12. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຄຸ້ມຄອງວຽກງານເງິນຕາຕ່າງປະເທດ ໃຫ້ລັດຖະບານຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ຂອງບັນດາ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໂຄສະນາ ເຜີຍແຜ່ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ; ປຸກຈິດສຳນຶກໃຫ້ແກ່ສັງຄົມ ໃນການນຳໃຊ້ເງິນຕາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ນຳໃຊ້ມາດຕະການທາງບໍລິຫານ ຕໍ່ວິສາຫະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ລະເມີດກົດໝາຍສະບັບນີ້ ຕາມພາລະບົດບາດຂອງຕົນ. ນອກຈາກນີ້ ຍັງມີ ສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ຕິດຕາມ ກວດກາ ການນຳເງິນຕາເປັນເງິນສົດເຂົ້າ-ອອກ ສປປ ລາວ, ສະເໜີແຜນການກູ້ຢືມ, ແຜນການຊຳລະໜີ້ສິນ ແລະ ການຄໍ້າປະກັນເງິນກູ້ ກັບຕ່າງປະເທດ ໃຫ້ທະນາຄານແຫ່ງ ສປປ ລາວ ພ້ອມທັງສົມທົບກັບທະນາຄານແຫ່ງ ສປປ ລາວ ໃນການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດຄຸ້ມຄອງ ການກູ້ຢືມ ແລະ ໜີ້ສິນຕ່າງປະເທດ; ຕິດຕາມ ກວດກາ ການນຳເຂົ້າ-ສົ່ງອອກ ສິນຄ້າ ໃຫ້ສອດຄ່ອງຕາມຄວາມເປັນຈິງ ແລະ ແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການຈັດຕັ້ງປະຕິບັດແຜນງົບປະມານ; ນຳໃຊ້ມາດຕະການຕໍ່ຜູ້ລະເມີດທີ່ນຳເງິນຕາເປັນເງິນສົດເຂົ້າ-ອອກ ສປປ ລາວ ເກີນມູນຄ່າທີ່ກຳນົດ ໂດຍບໍ່ໄດ້ແຈ້ງ ແລະ/ຫຼື ບໍ່ໄດ້ຮັບອະນຸຍາດ;

2. ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງລວມສູນ ແລະ ຊຸກຍູ້ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການວິເຄາະກ່ຽວກັບທຶນທີ່ຈະລົງທຶນ ຢູ່ ສປປ ລາວ, ຕິດຕາມ ກວດກາ ການນຳທຶນເຂົ້າ-ອອກ ສປປ ລາວ ຂອງຜູ້ລົງທຶນຕ່າງປະເທດ ແລະ ຜູ້ລົງທຶນ ຢູ່ເຂດເສດຖະກິດພິເສດ; ຕິດຕາມ ກວດກາ ການຊ່ວຍເຫຼືອລ້າ ແລ້ວສະເໜີຂໍ້ມູນໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ; ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

3. ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ໃນການຕິດຕາມ ກວດກາ ການກຳນົດ ແລະ ຕິດລາຄາ, ການໂຄສະນາ, ຊຳລະ ແລະ ຮັບຊຳລະ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ລວມທັງການກຳນົດໂຄງສ້າງລາຄາ ໃຫ້ເປັນເງິນກີບ; ພັດທະນາເຄື່ອງມືການຄຸ້ມຄອງລວມສູນກ່ຽວກັບຫົວໜ່ວຍວິສາຫະກິດນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ພ້ອມທັງຊຸກຍູ້ຫົວໜ່ວຍວິສາຫະກິດດັ່ງກ່າວ ໃນການເປີດບັນຊີເງິນຝາກສະເພາະ; ສະເໜີຂໍ້ມູນເງິນຕາຕ່າງປະເທດ ຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ, ຂໍ້ມູນທະບຽນວິສາຫະກິດ, ການນຳເຂົ້າທຶນທີ່ເປັນເງິນຕາຕ່າງປະເທດ ຂອງຫົວໜ່ວຍວິສາຫະກິດ ໃຫ້ທະນາຄານແຫ່ງ ສປປ ລາວ; ນຳໃຊ້ມາດຕະການຕໍ່ຜູ້

ລະເມີດທີ່ກຳນົດ ແລະ ຕິດລາຄາ, ການໂຄສະນາ, ຊຳລະ ແລະ ຮັບຊຳລະ ຄ່າສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນ ເປັນເງິນຕາຕ່າງປະເທດ ລວມທັງໂຈະການອະນຸຍາດການນຳເຂົ້າ-ສົ່ງອອກຊົ່ວຄາວ ໃນກໍລະນີທີ່ຜູ້ນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ປະຕິບັດບໍ່ສອດຄ່ອງກັບກົດໝາຍສະບັບນີ້;

4. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ຕິດຕາມການກຳນົດ, ການໂຄສະນາ ເງິນເດືອນ ຫຼື ຄ່າແຮງງານ ໃຫ້ສອດຄ່ອງກັບກົດໝາຍສະບັບນີ້; ຊຸກຍູ້ແຮງງານໃຫ້ໂອນເງິນເຂົ້າ-ອອກ ສປປ ລາວ ຜ່ານຜູ້ໃຫ້ບໍລິການຊຳລະ ແລະ ສະໜອງຂໍ້ມູນ ກ່ຽວກັບຜູ້ອອກແຮງງານ ໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ;

5. ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ປະຕິບັດມາດຕະການຕໍ່ຜູ້ນຳໃຊ້, ແລກປ່ຽນເງິນຕາ, ນຳເງິນຕາເປັນເງິນສົດເຂົ້າ-ອອກ ສປປ ລາວ ແລະ ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

6. ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງອື່ນ ມີ ສິດ ແລະ ໜ້າທີ່ ໃນການ ຊຸກຍູ້ ແລະ ຕິດຕາມ ກວດກາ ການນຳລາຍຮັບຈາກການສົ່ງອອກ ສິນຄ້າ ແລະ ການບໍລິການ ເຂົ້າ ສປປ ລາວ, ການນຳທຶນເຂົ້າ-ອອກ ສປປ ລາວ, ການຖອກ ແລະ ນຳໃຊ້ທຶນຈົດທະບຽນ ແລະ ທຶນທັງໝົດ ຂອງວິສາຫະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

7. ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ສະໜອງຂໍ້ມູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານຄຸ້ມຄອງເງິນຕາຕ່າງປະເທດ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາວຽກງານເງິນຕາຕ່າງປະເທດ

### ມາດຕາ 49 (ປັບປຸງ) ອົງການກວດກາວຽກງານເງິນຕາຕ່າງປະເທດ

ອົງການກວດກາວຽກງານເງິນຕາຕ່າງປະເທດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

### ມາດຕາ 50 (ປັບປຸງ) ເນື້ອໃນການກວດກາ

ການກວດກາວຽກງານເງິນຕາຕ່າງປະເທດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ກ່ຽວກັບການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

2. ການປະຕິບັດ ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ລວມທັງການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ລະເມີດ;

3. ການເຄື່ອນໄຫວໃຫ້ບໍລິການເງິນຕາຕ່າງປະເທດ;

4. ເນື້ອໃນອື່ນທີ່ເຫັນວ່າມີ ຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 51 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານຄຸ້ມຄອງເງິນຕາຕ່າງປະເທດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ, ບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານດັ່ງກ່າວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 53 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ທີ່ສ້າງຄວາມເສຍຫາຍ ແກ່ລັດ ແລະ ສັງຄົມ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງບໍລິຫານອື່ນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ/ຫຼື ຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ. ສຳລັບການລົງວິໄນ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 54 (ປັບປຸງ) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກ ສຶກສາອົບຮົມ, ກ່າວເຕືອນຈາກອົງການທີ່ກ່ຽວຂ້ອງ ພ້ອມທັງບັນທຶກເປັນລາຍລັກອັກສອນ. ສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ ນອກຈາກຈະຖືກສຶກສາອົບຮົມຈາກອົງການທີ່ກ່ຽວຂ້ອງ ແລ້ວຍັງຈະຖືກສຶກສາອົບຮົມຈາກການຈັດຕັ້ງທີ່ຕົນສັງກັດຢູ່ຕື່ມອີກ.

**ມາດຕາ 55 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມຕາມມາດຕາ 54 ຂອງກົດໝາຍສະບັບນີ້ແລ້ວ ແຕ່ຍັງສືບຕໍ່ກະທຳຜິດຊ້ຳ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປັບໃໝແຕ່ 10.000.000 (ສິບລ້ານ) ກີບ ຫາ 20.000.000 (ຊາວລ້ານ) ກີບ ສຳລັບ:

ກ. ເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ເປັນການລະເມີດມາດຕາ 43 ໃນຂໍ້ 1, 6, 7, 8, 9, 10, 11, 13, 14 ແລະ 15 ຂອງກົດໝາຍສະບັບນີ້ ມີມູນຄ່າທຽບເທົ່າຕໍ່າກວ່າ 10.000.000 (ສິບລ້ານ) ກີບ;

ຂ. ກຳນົດມູນຄ່າ, ຕິດປະກາດ ແລະ/ຫຼື ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ, ເງິນເດືອນ ຫຼື ຄ່າແຮງງານ ແລະ ຄ່າອື່ນ, ກຳນົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ເປັນເງິນຕາຕ່າງປະເທດ;

ຄ. ໂຄສະນາ ແລະ/ຫຼື ປະກາດການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບໂດຍຜ່ານຊ່ອງທາງຕ່າງໆ ທີ່ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງກັບທຸລະກຳເງິນຕາຕ່າງປະເທດ;

ງ. ກຳນົດ ແລະ ຕິດປະກາດ ອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

ຈ. ປະຕິເສດການໃຫ້ຄວາມຮ່ວມມືກັບ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງໃນການຄຸ້ມຄອງເງິນຕາຕ່າງປະເທດ.

2. ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ສຳລັບການເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ເປັນການລະເມີດມາດຕາ 43 ໃນຂໍ້ 1, 6, 7, 8, 9, 10, 11, 13, 14 ແລະ 15 ຂອງກົດໝາຍສະບັບນີ້ ທີ່ມີມູນຄ່າທຽບເທົ່າແຕ່ 10.000.000 (ສິບລ້ານ) ກີບ ຂຶ້ນໄປ.

ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

**ມາດຕາ 56 (ໃໝ່) ມາດຕະການທາງບໍລິຫານອື່ນ**

ວິສາຫະກິດທີ່ຖືກປະຕິບັດ ມາດຕະການສຶກສາອົບຮົມ ແລະ ມາດຕະການປັບໃໝ ຕາມມາດຕາ 54 ແລະ 55 ຂອງກົດໝາຍສະບັບນີ້ແລ້ວ ແຕ່ຍັງມີການລະເມີດລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ຈະຖືກປະຕິບັດມາດຕະການທາງບໍລິຫານອື່ນ ດັ່ງນີ້:

1. ໂຈະການອະນຸຍາດສົ່ງອອກ ສິນຄ້າ ແລະ ການບໍລິການ ໃນກໍລະນີທີ່ດຳເນີນທຸລະກຳຊຳລະຄ່າສິນຄ້າ ແລະ ການບໍລິການ ກັບຕ່າງປະເທດ ໂດຍບໍ່ຜ່ານບັນຊີເງິນຝາກສະເພາະ, ບໍ່ໂອນລາຍຮັບຈາກການສົ່ງອອກ ເຂົ້າມາ ສປປ ລາວ ຕາມກຳນົດເວລາ ຫຼື ບໍ່ຂາຍເງິນຕາຕ່າງປະເທດທີ່ໄດ້ຮັບຈາກການສົ່ງອອກໃຫ້ທະນາຄານທຸລະກິດຕາມລະບຽບການ;

2. ໂຈະການອະນຸຍາດນຳເຂົ້າ ສິນຄ້າ ແລະ ການບໍລິການ ໃນກໍລະນີທີ່ດຳເນີນທຸລະກຳຊຳລະຄ່າສິນຄ້າ ແລະ ການບໍລິການ ກັບຕ່າງປະເທດ ໂດຍບໍ່ຜ່ານບັນຊີເງິນຝາກສະເພາະ;

3. ບໍ່ໄດ້ຮັບການພິຈາລະນາຢັ້ງຢືນການນຳທຶນເຂົ້າ ສປປ ລາວ ໃນກໍລະນີທີ່ສະເໜີຂໍຢັ້ງຢືນການນຳທຶນເຂົ້າຊ້າກວ່າເວລາທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ບໍ່ສະເໜີຂໍຢັ້ງຢືນ ຫຼື ບໍ່ລາຍງານ ການນຳເຂົ້າທຶນຄັ້ງຜ່ານມາ ໂດຍບໍ່ມີເຫດຜົນພຽງພໍ;

4. ໂຈະການໂອນເງິນອອກ ສປປ ລາວ ຫຼື ໂຈະການເຄື່ອນໄຫວທຸລະກຳທາງການເງິນຜ່ານລະບົບທະນາຄານ ໃນກໍລະນີທີ່ກູ້ຢືມເງິນຈາກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ລາຍງານການເຄື່ອນໄຫວເງິນກູ້ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;

5. ໂຈະການດຳເນີນທຸລະກິດ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 57 (ປັບປຸງ) ມາດຕະການທາງອາຍາ**

ບຸກຄົນ ແລະ ນິຕິບຸກຄົນ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງມີອົງປະກອບຂອງການກະທຳຜິດທາງອາຍາ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ

ແລະ ເງິນຕາ ຂອງ ສປປ ລາວ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

ນອກຈາກນີ້ ຖ້າບຸກຄົນ ແລະ/ຫຼື ນິຕິບຸກຄົນໃດ ທີ່ປັ່ນປ່ວນອັດຕາແລກປ່ຽນ ກໍໃຫ້ຖືເປັນການກະທຳຜິດທາງອາຍາເຊັ່ນກັນ.

### ມາດຕາ 58 (ໃໝ່) ການປັ່ນປ່ວນອັດຕາແລກປ່ຽນ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການ ສ້າງຂ່າວປອມ, ບິດເບືອນ ຂໍ້ມູນຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ, ກຳນົດອັດຕາແລກປ່ຽນ, ຊື້ ຂາຍ ເງິນຕາໂດຍບໍ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາ ຂອງ ສປປ ລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ປັບໃໝ ແຕ່ 50.000.000 (ຫ້າສິບລ້ານ) ກີບ ຫາ 100.000.000 (ໜຶ່ງຮ້ອຍລ້ານ) ກີບ.

## ພາກທີ IX
## ບົດບັນຍັດສຸດທ້າຍ

### ມາດຕາ 59 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 60 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ ລົງວັນທີ 22 ທັນວາ 2014.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ